# ຂໍ້ແນະນຳສຳລັບຄະນະກຳມະການປະສານງານກອງທຶນໂລກ: ກ່ຽວກັບການຕິດຕາມກວດກາຂອງຄະນະກຳມະການ

ປັບປຸງ: ຕຸລາ 2020

## ຈຸດປະສົງ ແລະ ຜູ້ຊົມໃຊ້ຂໍ້ແນະນຳສະບັບນີ້

- ຂໍ້ແນະນຳສະບັບນີ້ມີຈຸດປະສົງເພື່ອສະໜັບສະໜູນຄະນະກຳມະການປະສານງານກອງທຶນໂລກ (CCM[1]) ມີໜ້າທີ່ຕິດຕາມກວດກາ. ໃນຂະນະທີ່ຜູ້ນຳໃຊ້ຫຼັກຂໍ້ແນະນຳສະບັບນີ້ແມ່ນສະມາຊິກ CCM ແລະ ຄະນະກຳມະການກວດກາຂອງ CCM, ແຕ່ກໍຍັງກ່ຽວຂ້ອງກັບກອງເລຂາ CCM, ຄະນະນຳ CCM, ຜູ້ຮັບທຶນຕົ້ນຕໍ (PR) ແລະ ຕົວແທນຂອງກອງທຶນໂລກທີ່ຢູ່ປະຈຳພາຍໃນປະເທດ (LFA).

## ນິຍາມກ່ຽວກັບການຕິດຕາມກວດກາ

- **ການຕິດຕາມກວດກາ**ແມ່ນເນັ້ນໃສ່ວຽກງານການເງິນ, ແຜນງານ ແລະ ການບໍລິຫານຄຸ້ມຄອງໂຄງການທີ່ສຳຄັນຂອງທຶນຊ່ວຍເຫຼືອ ແລະ ການປະກອບສ່ວນເຂົ້າໃນວຽກງານສາທາລະນະສຸກແຫ່ງຊາດ. ວຽກງານຕິດຕາມກວດການີ້, ເຊິ່ງຈະເບິ່ງ "ສັນຍານທີ່ສຳຄັນ" ຫຼື ອີງປະກອບໃນລະດັບສູງຂອງການລົງທຶນຂອງກອງທຶນໂລກ, ແມ່ນມີຈຸດປະສົງເພື່ອກວດສອບວ່າທຶນຊ່ວຍເຫຼືອດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຕາມແຜນແລະເປົ້າໝາຍທີ່ໄດ້ວາງໄວ້. ການຕິດຕາມກວດກາຕ້ອງສອດຄ່ອງກັບເງື່ອນໄຂທີ່ 3 ຂອງ CCM ຕາມທີ່ໄດ້ລະບຸໄວ້ໃນນະໂຍບາຍ CCM;
- ການຕິດຕາມກວດກາ (oversight) ນີ້ບໍ່ແມ່ນການຕິດຕາມຊຸກຍູ້ (monitoring) ທຶນຊ່ວຍເຫຼືອແບບປະຈຳວັນເຊິ່ງແມ່ນຄວາມຮັບຜິດຊອບຂອງ PR. ເຖິງຢ່າງໃດກໍ່ຕາມ, ໜ້າທີ່ດັ່ງກ່າວແມ່ນໂອກາດທີ່ຈະສະໜັບສະໜູນ PRs ໃນການກຳນົດ ແລະ ແກ້ໄຂຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດທີ່ສຳຄັນ;
- ຫຼັກການທີ່ສຳຄັນໃນການຕິດຕາມກວດກາແມ່ນເພື່ອຮັບປະກັນວ່າທຶນຊ່ວຍເຫຼືອໄດ້ຖືກນຳໃຊ້ຢ່າງມີປະສິດທິພາບ ແລະ ມີປະສິດຕິຜົນໃນການຢຸດຕິພະຍາດຕ່າງໆໃນຂະນະດຽວກັນກໍສ້າງລະບົບສາທາລະນະສຸກແບບຍືດຍຸ່ນ ແລະ ຍືນຍົງ.

## ການຕິດຕາມກວດກາທີ່ປະສົບຜົນສຳເລັດ

- CCM ຕ້ອງບັນລຸການຈັດຕັ້ງປະຕິບັດໜ້າທີ່ຕິດຕາມກວດກາໂດຍການເພິ່ງພາຕົນເອງຢ່າງໝັ້ນຄົງ, ຮັບປະກັນວ່າຂໍ້ມູນຍຸດທະສາດຍັງຄົງຢູ່ໃນຫຼັກຂອງການຕັດສິນໃຈໂດຍ CCM ທັງໝົດ; ການບໍລິຫານຄຸ້ມຄອງຄວາມສ່ຽງແມ່ນຮາກຖານຂອງການເຮັດວຽກ; ການພົວພັນລະຫວ່າງ PR-CCM ແມ່ນການຮ່ວມມື ແລະ ເກື້ອໜູນເຊິ່ງກັນແລະກັນ; ວຽກງານການເງິນ, ແຜນງານ ແລະ ການບໍລິຫານຄຸ້ມຄອງໂຄງການທີ່ສຳຄັນຂອງທຶນຊ່ວຍເຫຼືອ ແລະ ການປະກອບສ່ວນຂອງໂຄງການເຂົ້າໃນວຽກງານສາທາລະນະສຸກແຫ່ງຊາດທີ່ພົວພັນກັບ

[1]ຈຸດປະສົງຂອງຂໍ້ແນະນຳສະບັບນີ້, CCM ໝາຍເຖິງຄະນະກຳມະການປະສານງານລະດັບປະເທດແລະ ພາກພື້ນຕາມທີ່ໄດ້ກຳນົດໄວ້ໃນນະໂຍບາຍ CCM.

ສາມພະຍາດແມ່ນໄດ້ຖືກວິເຄາະ, ນຳໃຊ້ເປັນບ່ອນອີງໃນການຕັດສິນໃຈ ແລະ ມີການຕິດຕາມຢ່າງໃກ້ຊິດເພື່ອການປັບປຸງຍຸດທະສາດໃນຕໍ່ໜ້າ.

**ພາກສ່ວນກ່ຽວຂ້ອງທີ່ສຳຄັນເຂົ້າຮ່ວມ**

- **ຄະນະກຳມະການກວດກາ CCM.** CCM ສ້າງຕັ້ງຄະນະກຳມະການກວດກາ (ເອີ້ນວ່າ Oversight Working Group ຫຼື Oversight Body) ເພື່ອວາງແຜນ, ປະສານງານ ແລະ ດຳເນີນການຕິດຕາມກວດກາທຶນຊ່ວຍເຫຼືອຂອງກອງທຶນໂລກໃນນາມຕາງໜ້າ CCM[2]. ຄະນະກຳມະການກວດກາສະເໜີ**ຄຳເຫັນ ແລະ ຂໍ້ແນະນຳໂດຍອີງໃສ່ຫຼັກຖານ**ຕໍ່ CCM ເພື່ອສົນທະນາ ແລະ ຕັດສິນໃຈ ແຕ່ຄະນະກຳມະການກວດກາບໍ່ແມ່ນອົງກອນທີ່ຕັດສິນໃຈ. ຄະນະກຳມະການນີ້ມີບົດບາດສຳຄັນໃນການຮັບປະກັນວ່າຄຳເຫັນ ແລະ ຂໍ້ແນະນຳດ້ານວິຊາການໄດ້ຖືກນຳໄປຈັດຕັ້ງປະຕິບັດຢ່າງເໝາະສົມ ແລະ ທັນເວລາ**ເພື່ອແກ້ໄຂບັນຫາໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ** ແລະ ສະໜັບສະໜູນ PR ໃນການ**ເພີ່ມປະສິດທິພາບຂອງການປະຕິບັດທຶນຊ່ວຍເຫຼືອ**. ຂໍ້ມູນເພີ່ມເຕີມກ່ຽວກັບບົດບາດ, ອົງປະກອບ ແລະ ຂອບເຂດວຽກງານຂອງຄະນະກຳມະການກວດກາໄດ້ມີໃນເອກະສານຄັດຕິດທີ່4.
- **ກອງເລຂາ CCM** ຮັບປະກັນການເກັບກຳ, ການສັງລວມ ແລະ ການນຳໃຊ້ຂໍ້ມູນຕິດຕາມກວດກາໃນກອງປະຊຸມ CCM ເພື່ອການຕັດສິນໃຈ (ຕົວຢ່າງໂດຍຫົວໜ້າກອງເລຂາ ແລະ / ຫຼື ພະນັກງານຮັບຜິດຊອບຕິດຕາມກວດກາ/ການປ່ຽນຖ່າຍ, ອີງຕາມເງື່ອນໄຂຕົວຈິງ) ຕົວຢ່າງພາລະບົດບາດຂອງພະນັກງານຮັບຜິດຊອບຕິດຕາມກວດກາ/ການປ່ຽນຖ່າຍແມ່ນລວມຢູ່ໃນເອກະສານຄັດຕິດທີ່5.
- **ຜູ້ຮັບທຶນຕົ້ນຕໍ** ຜູ້ປະຕິບັດທຶນຊ່ວຍເຫຼືອປະກອບສ່ວນເຂົ້າໃນຜົນສຳເລັດຂອງໜ້າທີ່ຕິດຕາມກວດກາໂດຍການຮ່ວມມືກັບ CCM (ໂດຍສະເພາະຄະນະກຳມະການກວດກາ). ຄວາມຮັບຜິດຊອບຂັ້ນຕົ້ນລວມມີ: ການແລກປ່ຽນຂໍ້ມູນຂ່າວສານຢ່າງເປັນລະບົບກ່ຽວກັບການປະຕິບັດໂຄງການ ແລະ ການພົວພັນສື່ສານກ່ຽວກັບບັນຫາທີ່ກ່ຽວຂ້ອງກັບໂຄງການຕະຫຼອດໄລຍະຮອບວຽນທຶນຊ່ວຍເຫຼືອ[3].
- **ທີມງານກອງທຶນໂລກ[4].** ຄວາມເຂົ້າໃຈຂອງທີມງານກອງທຶນໂລກກ່ຽວກັບການປະຕິບັດທຶນຊ່ວຍເຫຼືອ ແລະ ບັນຫາໃນການຈັດຕັ້ງປະຕິບັດແມ່ນມີຄວາມສຳຄັນຕໍ່ໜ້າທີ່ຂອງວຽກງານກວດກາ. ການສື່ສານແບບປົກກະຕິ ແລະ ຕໍ່ເນື່ອງກັນລະຫວ່າງ CCM ແລະ ທີມງານກອງທຶນໂລກຈະຊ່ວຍເສີມຂະຫຍາຍວຽກງານຕິດຕາມກວດກາໂດຍຮ່ວມກັນກຳນົດຄວາມສ່ຽງທີ່ອາດຈະເກີດຂຶ້ນ ແລະ ຫາວິທີການແກ້ໄຂສິ່ງທ້າທາຍ.
- **ສະມາຊິກ CCM** ການມີສ່ວນຮ່ວມໃນການຕິດຕາມກວດກາໂດຍສະມາຊິກ CCM ແມ່ນເລີ້ມແຕ່ການມີສ່ວນຮ່ວມໃນການຕັດສິນໃຈໂດຍອີງໃສ່ການສະເໜີ ແລະ ແນະນຳຂອງຄະນະກຳມະການກວດກາ ແລະ ການສະໜັບສະໜູນກິດຈະກຳໃນການເກັບກຳຂໍ້ມູນ. ສະມາຊິກCCM (ໂດຍສະເພາະສະມາຊິກຄະນະກຳມະການກວດກາ) ຄວນມີຄວາມຮູ້ກ່ຽວກັບອົງປະກອບທີ່ສຳຄັນຂອງທຶນຊ່ວຍເຫຼືອ (i.e. ການຈັດສັນງົບປະມານໂດຍລວມ, ຕົວຊີ້ວັດຂອງແຜນງານ, ຄວາມສ່ຽງ, ຜູ້ຈັດຕັ້ງປະຕິບັດແລະອື່ນໆ) ແລະ ຍຸດທະສາດແຫ່ງຊາດທີ່ຊ່ວຍກຳນົດການຕອບໂຕ້ຕໍ່ສາມພະຍາດນີ້.

---

[2]ເບິ່ງເອກະສານຄັດຕິດທີ1 ສຳລັບຂໍ້ມູນເພີ່ມເຕີມ

[3]ດັ່ງທີ່ໄດ້ອະທິບາຍໄວ້ໃນຂໍ້ 32 ຂອງນະໂຍບາຍCCM

[4]ສິ່ງເຫຼົ່ານີ້ແມ່ນນຳພາໂດຍຜູ້ຈັດການກອງທຶນກອງທຶນ (FPM) ແລະລວມທັງພາກສ່ວນອື່ນໆ ເຊິ່ງຂຶ້ນກັບການລົງທຶນ.

**ຄວາມຄາດຫວັງຫຼັກຂອງວຽກງານກວດກາ**

CCMs ຄວນພິຈາລະນາຄວາມຄາດຫວັງຕໍ່ໄປນີ້ເຊິ່ງເປັນສ່ວນໜຶ່ງໃນບົດບັນຍັດຂອງແຜນການຕິດຕາມກວດກາ ແລະ ກິດຈະກຳຕ່າງໆທີ່ປະຕິບັດໂດຍຄະນະກຳມະການຕິດຕາມກວດກາ.

- **ຈຸດສຸມຍຸດທະສາດ.** ໃນຂະນະທີ່ການຕິດຕາມກວດກາຕົ້ນຕໍແມ່ນເນັ້ນໃສ່ວຽກງານການເງິນ, ແຜນງານ ແລະ ການບໍລິຫານຄຸ້ມຄອງໂຄງການທີ່ສຳຄັນຂອງທຶນຊ່ວຍເຫຼືອຂອງກອງທຶນໂລກ ແລະ ສິ່ງສຳຄັນສຳລັບ CCM ທີ່ຈະຕ້ອງຮັກສາບຸລິມະສິດຍຸດທະສາດລະດັບຊາດໃຫ້ຢູ່ໃນລະດັບແຖວໜ້າເພື່ອຮັບປະກັນວ່າການລົງທຶນແມ່ນໄດ້ປະກອບສ່ວນຢ່າງມີປະສິດທິຜົນເຂົ້າໃນການຢຸດຕິພະຍາດດັ່ງກ່າວ.
- **ນຳໃຊ້ຂໍ້ມູນ ແລະ ຫຼັກຖານເພື່ອຂັບເຄື່ອນວຽກງານຕິດຕາມກວດກາ.** ແຫຼ່ງຂໍ້ມູນປະກອບມີແຜນງານກ່ຽວກັບພະຍາດແຫ່ງຊາດ, ໂຄງການລິເລີ່ມການຕິດຕາມຊຸມຊົນ (ບ່ອນທີ່ມີຢູ່), ຂໍ້ມູນຈາກຄູ່ຮ່ວມງານ (ສອງຝ່າຍແລະຫຼາຍຝ່າຍ) ແລະ ບັນດາຄູ່ຮ່ວມພັດທະນາອື່ນໆ[5].
- **ການບໍລິຫານຈັດການຄວາມສ່ຽງ.** ການກວດກາຄວນຮັບຮອງເອົາວິທີການບໍລິຫານຈັດການຄວາມສ່ຽງ - ການກຳນົດຄວາມສ່ຽງ, ການຈັດບຸລິມະສິດ, ການຫຼຸດຜ່ອນ, ການຕິດຕາມ ແລະ ການຮັບປະກັນເຂົ້າໃນຍຸດທະສາດການຕິດຕາມກວດກາ.
- **ຄຳໝັ້ນສັນຍາໃນການປະກອບສ່ວນທຶນສົມທົບຂອງລັດຖະບານ.** ອີງຕາມຂໍ້ແນະນຳຂອງກອງທຶນໂລກກ່ຽວກັບຄວາມຍືນຍົງ, ການປ່ຽນຖ່າຍ ແລະ ທຶນສົມທົບ ແລະ ນະໂຍບາຍທີ່ກ່ຽວຂ້ອງ, CCM ຄວນເສີມຂະຫຍາຍບົດບາດໃນການຕິດຕາມໃຫ້ເພີ່ມຂຶ້ນກ່ວາເກົ່າເພື່ອພະຍາຍາມສ້າງຄວາມຍືນຍົງລວມທັງການປະຕິບັດຄຳໝັ້ນສັນຍາໃນການປະກອບສ່ວນທຶນສົມທົບຂອງລັດຖະບານ. ຖ້າສະພາບການ ແລະ ແຫຼ່ງທຶນເອື້ອອຳນວຍ, CCM ຕ້ອງຕິດຕາມສະຖານະພາບ ແລະ ການຂໍສະໜັບສະໜູນ ເພື່ອປະຕິບັດຄຳໝັ້ນສັນຍາໃນການປະກອບສ່ວນທຶນສົມທົບຂອງລັດຖະບານຕາມທີ່ໄດ້ຕົກລົງກັນກັບກອງທຶນໂລກ.
- **ວິທີການແກ້ໄຂບັນຫາຮ່ວມກັນ.** ສາຍພົວພັນຮ່ວມມືລະຫວ່າງ CCM ແລະ PRs ແມ່ນຮັບປະກັນການແລກປ່ຽນຂໍ້ມູນທີ່ກ່ຽວຂ້ອງກັບທຶນຊ່ວຍເຫຼືອຢ່າງເປັນປະຈຳ ແລະ ສ້າງຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ. ສິ່ງນີ້ຊ່ວຍເປີດໂອກາດໃຫ້ມີການສົນທະນາເພື່ອຮ່ວມກັນແກ້ໄຂບັນຫາ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດ ແລະ ຫຼຸດຜ່ອນຄວາມສ່ຽງເພື່ອປັບປຸງການປະຕິບັດທຶນຊ່ວຍເຫຼືອ. ລາຍລະອຽດກ່ຽວກັບການປະຕິບັດວຽກປະຈຳວັນແມ່ນຍັງຢູ່ໃນຄວາມຮັບຜິດຊອບຂອງ PRs, ໃນຂະນະທີ່ການກວດກາແມ່ນຮຽກຮ້ອງໃຫ້ CCM ຕ້ອງເຂົ້າໃຈວ່າການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອແມ່ນຈະຕ້ອງເຮັດແນວໃດ.

## ເອກະສານຄັດຕິດແລະ ແຫຼ່ງຂໍ້ມູນ

- ເອກະສານຄັດຕິດ 1: ຂະບວນການກວດກາ
- ເອກະສານຄັດຕິດ 2: ການກວດກາໃນໄລຍະຮອບວຽນທຶນຊ່ວຍເຫຼືອ
- ເອກະສານຄັດຕິດ 3: ແຜນການກວດກາ - ການພິຈາລະນາແລະ ຄຳແນະນຳອື່ນໆ
- ເອກະສານຄັດຕິດ 4: ຄະນະກຳມະການກວດກາ: ພາລະບົດບາດ, ອົງປະກອບແລະຂອບເຂດການເຮັດວຽກ
- ເອກະສານຄັດຕິດ 5: ພາລະບົດບາດຂອງພະນັກງານຕິດຕາມກວດກາ / ການປ່ຽນຖ່າຍ
- ໂມດູນການຮຽນຮູ້ແບບ E-learning ກ່ຽວກັບວຽກງານຕິດຕາມກວດກາ

[5] ເບິ່ງເອກະສານຄັດຕິດ 1 ຂໍ້ມູນເພີ່ມເຕີມກ່ຽວກັບຂະບວນການກວດກາ ແລະ ແຫຼ່ງຂໍ້ມູນ